# ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາ ນະຄອນຫຼວງວຽງຈັນ

ເອກະສານລາຍງານການເງິນ

ວັນທີ 31 ທັນວາ 2018

# ທະນາຄານ ກຸງທບ ຈຳກັດ (ມະຫາຊົນ), ສາຂານະຄອນຫຼວງວຽງຈັນ

**ສາລະບານ**


| | *ໜ້າ* |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະບໍລິຫານ | 2 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 3 - 5 |
| ໃບລາຍງານຜົນການດຳເນີນງານ | 6 - 7 |
| ໃບລາຍງານຖານະການເງິນ | 8 - 10 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 11 |
| ໃບລາຍງານກະແສເງິນສົດ | 12 - 13 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 14 - 42 |

# ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາ ນະຄອນຫຼວງວຽງຈັນ

## ຂໍ້ມູນທົ່ວໄປ

### ສາຂາ

ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂານະຄອນຫຼວງວຽງຈັນ ("ສາຂາ") ເປັນສາຂາຂອງ ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) ທີ່ດຳເນີນງານຢູ່ທີ່ ປະເທດໄທ. ເຊິ່ງສາຂາໄດ້ເປີດດຳເນີນງານຢູ່ ສປປ ລາວ ຕາມໃບອະນຸຍາດ ດຳເນີນທຸລະກິດ ດ້ານການທະນາຄານ ເລກທີ 04/93/ທຫລ ອອກໃຫ້ໂດຍທະນາຄານແຫ່ງ ສປປ ລາວ ("ທຫລ") ລົງວັນທີ 25 ກຸມພາ 1993.

ວັນທີ 31 ທັນວາ 2018 ສາຂາມີທຶນຈົດທະບຽນທີ່ຖອກແລ້ວເປັນຈຳນວນ 100,000,000,000 ກີບ (ວັນທີ 31 ທັນວາ 2017 ມີຈຳນວນ 100,000,000,000 ກີບ).

ກິດຈະກຳຫຼັກຂອງສາຂາ ແມ່ນເພື່ອສະໜອງການບໍລິການດ້ານການທະນາຄານໂດຍທົ່ວໄປ ແລະ ເປັນການໃຫ້ບໍລິການທີ່ກ່ຽວກັບດ້ານການເງິນໃນ ສປປ ລາວ.

ສາຂາແມ່ນຕັ້ງຢູ່ໜ່ວຍທີ 12, ຖະໜົນ ສາມແສນໄທ, ບ້ານ ຊຽງຍືນ, ເມືອງ ຈັນທະບູລີ, ຕູ້ສະນີ 5400, ນະຄອນຫຼວງວຽງຈັນ, ສປປ ລາວ.

### ຄະນະບໍລິຫານ

ສະມາຊິກຂອງຄະນະບໍລິຫານພາຍໃນປີ ແລະ ໃນວັນທີທີ່ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ ນາງ ສະດາພອນ ອຸຣັດຊັດ | ຜູ້ຈັດການສາຂາ | 01 ຕຸລາ 2014 |

### ຕົວແທນທາງກົດໝາຍ

ຕົວແທນທາງກົດໝາຍຂອງສາຂາ ພາຍໃນທ້າຍປີການບັນຊີ 31 ທັນວາ 2018 ແລະ ໃນວັນທີ່ອອກເອກະສານລາຍງານສະບັບນີ້ແມ່ນ ທ່ານ ນາງ ສະດາພອນ ອຸຣັດຊັດ - ຜູ້ຈັດການສາຂາ

### ນັກກວດສອບ

ນັກກວດສອບບັນຊີ ຂອງສາຂາແມ່ນບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ.

# ທະນາຄານ ກຸງເທບ ຈໍາກັດ (ມະຫາຊົນ), ສາຂາ ນະຄອນຫຼວງວຽງຈັນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານສາຂາຂອງທະນາຄານກຸງເທບ ຈໍາກັດ (ມະຫາຊົນ) ("ສາຂາ") ມີຄວາມຍິນດີນໍາສະເໜີບົດລາຍງານ ຂອງຕົວເອງ ແລະ ເອກະສານລາຍງານການເງິນຂອງສາຂາ ໃນວັນທີ ແລະ ສໍາລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018.

**ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ**

ຄະນະບໍລິຫານຂອງສາຂາ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນຂອງແຕ່ລະປີການບັນຊີທີ່ສະແດງພາບພົດທີ່ຖືກຕ້ອງ ຄວາມເປັນຈິງ ແລະ ຍຸດຕິທໍາຂອງສາຂາ ລວມທັງຜົນປະກອບການຂອງສາຂາ ແລະ ກະແສເງິນສົດໃນປີ, ໃນການກະກຽມເອກະສານລາຍງານການເງິນດັ່ງກ່າວຄະນະບໍລິຫານຂອງສາຂາຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົາບັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ນໍາໃຊ້ຢ່າງສະໝໍ່າສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫລງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມ, ທຸກຂໍ້ຂັດແຍ່ງ ຫຼື ຂໍ້ແຕກຕ່າງທີ່ສໍາຄັນໃນການປະຕິບັດຕາມມາດຕະຖານການບັນຊີຕ້ອງຖືກນໍາມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດໍາເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ສາຂາຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າ ສາຂາຈະບໍ່ສາມາດດໍາເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານສາຂາມີໜ້າທີ່ຮັບຜິດຊອບໃນການຮັບປະກັນວ່າ ທຸກລາຍການບັນທຶກທາງການບັນຊີທີ່ໄດ້ຖືກເກັບໄວ້ໃນທີ່ເໝາະສົມເພື່ອທີ່ຈະໃຊ້ເປີດເຜີຍ ແລະ ມີຄວາມຮັບຜິດຊອບຕໍ່ຄວາມຖືກຕ້ອງຕະຫຼອດເວລາ, ລວມທັງຖານະການເງິນຂອງສາຂາ ແລະ ເພື່ອຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບບັນຊີທີ່ໄດ້ນໍາໃຊ້. ຄະນະບໍລິຫານຍັງຕ້ອງຮັບຜິດຊອບຕໍ່ການຮັກສາຊັບສິນຂອງສາຂາ ແລະ ດ້ວຍເຫດນັ້ນຈຶ່ງຕ້ອງມີຂັ້ນຕອນທີ່ເໝາະສົມໃນການປ້ອງກັນ ແລະ ສືບຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານ ຂໍຢັ້ງຢືນວ່າ ສາຂາ ໄດ້ປະຕິບັດຕາມຂໍ້ກໍານົດທີ່ກ່າວມາຂ້າງເທິງໃນການກະກຽມເອກະສານລາຍງານການເງິນ.

**ຄໍາຖະແຫລງການຂອງຄະນະບໍລິຫານ**

ຄະນະບໍລິຫານສາຂາມີຄວາມຍິນດີຖະແຫລງວ່າ ເອກະສານລາຍງານການເງິນໃນວັນທີ 31 ທັນວາ 2018 ແລະ ສໍາລັບປີທີ່ສິ້ນສຸດ ແມ່ນໄດ້ສະແດງພາບພົດອັນຖືກຕ້ອງ ແລະ ມີຄວາມຍຸດຕິທໍາ ໂດຍສອດຄ່ອງກັບກົດໝາຍການບັນຊີ ຂອງ ສປປ ລາວ ແລະ ລະບຽບການ ທີ່ວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນໍາສະເໜີເອກະສານລາຍງານການເງິນ.

ຕາງໜ້າ ແລະ ໃນນາມຄະນະບໍລິຫານ:

ທ່ານ ນາງ ສະກ່າພອນ ອຸຣິດຊິດ
ຜູ້ຈັດການສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ

8 ສິງຫາ 2019

EY
Building a better
working world

Ernst & Young Lao Co., Ltd
6th Floor, Kolao Tower I
23 Singha Road, Nongbone Village
Saysettha District
Vientiane Capital, Lao PDR

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61154742/20686888

## ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ:** **ຜູ້ຖືຮຸ້ນຂອງທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາ ນະຄອນຫຼວງວຽງຈັນ**

### *ຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂານະຄອນຫຼວງວຽງຈັນ, ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ໃນວັນທີ 31 ທັນວາ 2018, ໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ລວມທັງບົດສະຫຼູບນະໂຍບາຍການບັນຊີທີ່ສຳຄັນ

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງສາຂາແມ່ນໄດ້ກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ບັນດາລະບຽບການທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

### *ພື້ນຖານໃນການອອກຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ (IASs). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ພາຍໃຕ້ມາດຕະຖານສາກົນດັ່ງກ່າວແມ່ນໄດ້ ອະທິບາຍເພີ່ມເຕີມ ໃນວັກ *"ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ"* ສະບັບນີ້. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກສາຂາ ໂດຍສອດຄ່ອງກັບ ຈັນຍາບັນຂອງນັກວິຊາຊີບບັນຊີຂອງ ສະພານັກບັນຊີສາກົນວ່າດ້ວຍມາດຕະຖານຂໍ້ບັງຄັບດ້ານຈັນຍາບັນ (IESBA Code) ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບ ກົດຈັນຍາບັນຂອງ ສະພານັກບັນຊີສາກົນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

### *ຂໍ້ເນັ້ນໜັກ - ພື້ນຖານການບັນຊີ*

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນຳໃຊ້ໂດຍສາຂາ. ບັນດານະໂຍບາຍການບັນຊີດັ່ງກ່າວແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງສາຂາ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫານີ້.

### *ບັນຫາອື່ນໆ*

ເອກະສານລາຍງານການເງິນຂອງທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາ ນະຄອນຫຼວງວຽງຈັນ ສຳລັບປີທີ່ສິ້ນສຸດໃນວັນທີ 31 ທັນວາ 2017 ທີ່ໄດ້ນຳສະເໜີໃນທີ່ນີ້ເປັນຂໍ້ມູນປຽບທຽບທີ່ໄດ້ຖືກກວດສອບໂດຍນັກກວດສອບບັນຊີບໍລິສັດອື່ນເຊິ່ງໄດ້ອອກບົດລາຍງານໃນວັນທີ 28 ມີນາ 2018 ທີ່ສະແດງໃຫ້ເຫັນການບໍ່ປ່ຽນແປງຂອງບັນດາເອກະສານງາຍງານການເງິນເຫຼົ່ານັ້ນ.

***ຄວາມຮັບຜິດຊອບຂອງຄະນະບໍລິຫານສາຂາຕໍ່ເອກະສານລາຍງານການເງິນ***

ຄະນະບໍລິຫານສາຂາມີຄວາມຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງ ໂດຍສອດຄ່ອງຕາມກົດໝາຍການບັນຊີ ແລະ ລະບຽບການທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນລວມທັງ ການຄຸ້ມຄອງພາຍໃນທີ່ຄະນະບໍລິຫານຂອງສາຂາທີ່ເຫັນວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຈາກການສໍ້ໂກງ ຫລື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງສາຂາທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ລວມທັງການເປີດເຜີຍບັນຫາຕ່າງໆທີ່ກ່ຽວຂ້ອງກັບຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານສາຂາຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານສາຂາ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

***ຄວາມຮັບຜິດຊອບຂອງນັກກວດສອບ ຕໍ່ເອກະສານລາຍງານການເງິນ***

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອໄດ້ຮັບຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ. ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການເປັນສ່ວນໜຶ່ງຂອງກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫລວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ.

Building a better
working world

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນ ຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງສາຂາສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າ ສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ສາຂາຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ເຮັດຂຶ້ນໂດຍຄະນະບໍລິຫານ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານກ່ຽວກັບບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນ ລວມມີບັນດາຂໍ້ບົກຜ່ອງທີ່ສຳຄັນໃດໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ພົບເຫັນໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

Ernst & Young Lao Ltd

ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ
ERNST & YOUNG LAO CO.,LTD

ນະຄອນຫຼວງວຽງຈັນ, ສປປ ລາວ

8 ສິງຫາ 2019

# ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

| *ລຳດັບ* | | *ບົດ ອະທິບາຍເລກທີ* | *2018 ກີບ* | *2017 ກີບ* |
|---|---|---|---|---|
| A. | ລາຍຮັບ ແລະ ລາຍຈ່າຍໃນການດຳເນີນງານ | | | |
| 1. | ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | 3 | 41,270,519,312 | 42,742,993,361 |
| 2. | ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | 3 | (20,223,162,235) | (16,251,657,159) |
| I. | ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | 3 | 21,047,357,077 | 26,491,336,202 |
| 3 | ລາຍຮັບຈາກຄ່າທຳນຽມ ແລະ ການບໍລິການ | 4 | 16,269,526,503 | 10,898,313,574 |
| 4 | ລາຍຈ່າຍຄ່າທຳນຽມ ແລະ ການບໍລິການ | 4 | (383,009,213) | (340,113,411) |
| 5 | ລາຍຮັບສຸດທິຈາກການຊື້ ຂາຍເງິນຕາຕ່າງປະເທດ | 5 | 5,097,475,102 | 7,835,645,738 |
| II. | ລາຍຮັບສຸດທິຈາກການດຳເນີນງານ | | 42,031,349,469 | 44,885,182,103 |
| B | ລາຍຮັບ ແລະ ລາຍຈ່າຍອື່ນໆ | | | |
| 6 | ລາຍຮັບອື່ນໆຈາກການດຳເນີນງານ | 6 | 1,459,993,757 | 1,383,930,119 |
| 7 | ລາຍຈ່າຍທົ່ວໄປ ແລະຄ່າໃຊ້ຈ່າຍໃນການບໍລິຫານ | | (9,691,799,815) | (9,054,418,930) |
| 7.1 | ເງິນເດືອນ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງກັບບຸກຄະລາກອນ | 7 | (5,543,236,250) | (5,163,421,023) |
| 7.2 | ລາຍຈ່າຍອື່ນໆໃນການບໍລິຫານ | 8 | (2,667,002,617) | (2,644,177,063) |
| 7.3 | ລາຍຈ່າຍອື່ນໆໃນການດຳເນີນງານ | | (1,481,560,948) | (1,246,820,844) |
| 8 | ຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມ | 15, 16 | (858,064,295) | (946,235,528) |
| 9 | ລາຍຈ່າຍອື່ນໆໃນການດຳເນີນງານ | 9 | (24,550,000) | (1,725,636,317) |
| 10 | ລາຍຈ່າຍເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ | 14.2 | 512,160,000 | (10,381,434,599) |

# ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

| *ລຳດັບ* | | *ບົດອະທິບາຍເລກທີ* | *2018 ກີບ* | *2017 ກີບ* |
|---|---|---|---|---|
| III. | ກຳໄລກ່ອນອາກອນທັງໝົດ | | 33,429,089,116 | 24,161,386,848 |
| 11 | ອາກອນກຳໄລພາຍໃນປີ | 22.1 | (7,884,935,155) | (7,716,991,327) |
| 12 | ລາຍຮັບອາກອນເບື່ອນຊຳລະ | 22.2 | 8,828,452,049 | - |
| IV. | ກຳໄລສຸດທິພາຍໃນປີ | | 34,372,606,010 | 16,444,395,521 |

ກະກຽມໂດຍ:

ທ່ານ ນາງ ມະໂນລົມ ສາສີນອນ
ຫົວໜ້າບັນຊີ
ນະຄອນຫຼວງວຽງຈັນ, ສປປ ລາວ
8 ສິງຫາ 2019

ອະນຸມັດໂດຍ:

ທ່ານ ນາງ ສະດາພອນ ອຸຣັດຊັດ
ຜູ້ຈັດການສາຂາ

# ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂານະຄອນຫຼວງວຽງຈັນ

ໃບລາຍງານຖານະທາງການເງິນ
ໃນວັນທີ 31 ທັນວາ 2018

| *ລຳດັບ* | *ຊັບສິນ* | *ບົດ ອະທິບາຍ ເລກທີ* | *31 ທັນວາ 2018 ກີບ* | *31 ທັນວາ 2017 ກີບ* |
|---|---|---|---|---|
| I | **ເງິນສົດ ແລະ ເງິນຝາກຢູ່ ທຫລ** | | **185,240,129,168** | **212,087,578,616** |
| 1 | ເງິນສົດໃນຄັງ | 10 | 11,108,639,269 | 15,364,775,600 |
| 2 | ເງິນຝາກຢູ່ ທຫລ | 11 | 174,131,489,899 | 196,722,803,016 |
| II | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | | **695,674,109,550** | **493,187,238,066** |
| 1 | ເງິນຝາກກະແສລາຍວັນ | 12.1 | 350,041,610,350 | 100,845,718,066 |
| 2 | ເງິນຝາກມີກຳນົດ | 12.2 | 97,685,600,000 | 117,638,000,000 |
| 3 | ເງິນກູ້ປ່ອຍໃຫ້ບັນດາທະນາຄານ, ຫຼັງຫັກເງິນແຮ | 12.3 | 247,946,899,200 | 274,703,520,000 |
| III | **ການລົງທຶນໃນຫຼັກຊັບ** | | **137,306,376,000** | - |
| 1 | ພັນທະບັດທີ່ຖືຄອງຈົນເຖິງມື້ຄົບກຳນົດ | 13 | 137,306,376,000 | - |
| IV | **ເງິນກູ້ ແລະ ເງິນລ່ວງໜ້າປ່ອຍໃຫ້ລູກຄ້າ** | **14** | **257,245,892,553** | **339,919,549,344** |
| V | **ຊັບສິນບັດຄົງທີ່** | | **8,182,387,167** | **9,012,870,462** |
| 1 | ຊັບສິນບັດຄົງທີ່ມີຕົວຕົນ | 15 | 8,182,387,167 | 9,011,922,089 |
| 2 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 16 | - | 948,373 |
| VI | **ຊັບສິນອື່ນໆ** | | **27,755,975,228** | **45,266,055,949** |
| 1 | ດອກເບ້ຍຄ້າງຮັບ | 17 | 3,957,631,511 | 1,775,376,120 |
| 3 | ຊັບສິນອາກອນເຍື່ອນຊຳລະ | 22.2 | 8,828,452,049 | - |
| 2 | ຊັບສິນອື່ນໆ | 18 | 14,969,891,668 | 43,490,679,829 |
| | **ລວມຊັບສິນ** | | **1,311,404,869,666** | **1,099,473,292,437** |

# ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂານະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ (ຕໍ່)
ໃນວັນທີ 31 ທັນວາ 2018

| ລຳດັບ | ໜີ້ສິນ ແລະ ທຶນ | ບົດອະທິບາຍ ເລກທີ | 31 ທັນວາ 2018 ກີບ | 31 ທັນວາ 2017 ກີບ |
|---|---|---|---|---|
| I | **ໜີ້ຕ້ອງສົ່ງທະນາຄານອື່ນ** | 19 | **440,770,322,815** | **424,144,769,820** |
| 1 | ເງິນຝາກກະແສລາຍວັນ | | 87,035,171,003 | 55,803,727,756 |
| 2 | ເງິນເງິນຝາກມີກຳນົດ | | 102,000,000,000 | 90,000,000,000 |
| 3 | ເງິນກູ້ຢືມ | | 250,958,400,000 | 278,040,000,000 |
| 4 | ໜີ້ຕ້ອງສົ່ງອື່ນໆ | | 776,751,812 | 301,042,064 |
| II | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | 20 | **663,217,018,594** | **504,561,558,869** |
| 1 | ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ | | 547,886,454,534 | 371,350,373,175 |
| 2 | ເງິນຝາກມີກຳນົດ | | 111,568,252,776 | 131,825,652,463 |
| 3 | ໜີ້ຕ້ອງສົ່ງອື່ນໆລູກຄ້າ | | 3,762,311,284 | 1,385,533,231 |
| III | **ໜີ້ສິນອື່ນໆ** | | **15,482,550,222** | **12,204,025,349** |
| 1 | ດອກເບ້ຍຄ້າງຈ່າຍ | 21 | 3,020,526,723 | 2,163,412,569 |
| 2 | ໜີ້ຕ້ອງສົ່ງອາກອນ | 22.1 | 8,095,795,410 | 7,855,053,704 |
| 3 | ໜີ້ສິນອື່ນໆ | 23 | 4,366,228,089 | 2,185,559,076 |
| | **ລວມໜີ້ສິນ** | | **1,119,469,891,631** | **940,910,354,038** |
| IV | **ທຶນ ແລະ ຄັງສຳຮອງ** | | **191,934,978,035** | **158,562,938,399** |
| 1 | ທຶນຈົດທະບຽນ | 24 | 100,000,000,000 | 100,000,000,000 |
| 2 | ຄັງສຳຮອງຕາມລະບຽບການ | | 8,982,008,716 | 5,544,748,114 |
| 3 | ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ | 14.2 | 2,614,675,377 | 3,615,241,751 |
| 4 | ກຳໄລສະສົມ | | 80,338,293,942 | 49,402,948,534 |
| | **ລວມທຶນທັງໝົດ** | | **191,934,978,035** | **158,562,938,399** |
| | **ລວມໜີ້ສິນ ແລະ ທຶນ** | | **1,311,404,869,666** | **1,099,473,292,437** |

# ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂານະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ (ຕໍ່)
ໃນວັນທີ 31 ທັນວາ 2018

| ລຳດັບ | ລາຍການນອກໃບລາຍງານຖານະການເງິນ | ບົດອະທິບາຍ ເລກທີ | 31 ທັນວາ 2018 ກີບ | 31 ທັນວາ 2017 ກີບ |
|---|---|---|---|---|
| **I** | **ຄຳໝັ້ນສັນຍາ** | | | |
| **A** | **ຄຳໝັ້ນສັນຍາທາງການເງິນທີ່ໄດ້ໃຫ້** | | **31,191,508,969** | **17,937,334,636** |
| 1 | ຄຳໝັ້ນສັນຍາທາງການເງິນທີ່ໄດ້ໃຫ້ແກ່ລູກຄ້າ | | 23,597,238,303 | 8,561,122,792 |
| 2 | ບໍລິການຮຽກເກັບເງິນຕາມເອກະສານ | | 7,594,270,666 | 9,376,211,844 |
| **B** | **ຄຳໝັ້ນສັນຍາຄ້ຳປະກັນທີ່ໄດ້ໃຫ້** | | **473,066,523,152** | **416,230,376,465** |
| 1 | ຄຳໝັ້ນສັນຍາຄ້ຳປະກັນທີ່ໄດ້ໃຫ້ທີ່ໄດ້ໃຫ້ແກ່ລູກຄ້າ | | 473,066,523,152 | 416,230,376,465 |
| | **ລວມຄຳໝັ້ນສັນຍາທັງໝົດ** | | **504,258,032,121** | **434,167,711,101** |
| **II** | **ຫຼັກຊັບຄ້ຳປະກັນ ແລະ ການຈຳນອງ** | | | |
| **A** | **ຫຼັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບເງິນກູ້** | | **880,181,584,672** | **734,837,121,150** |
| 1 | ຫຼັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບເງິນກູ້ໃຫ້ລູກຄ້າ | | 880,181,584,672 | 734,837,121,150 |
| **B** | **ຫຼັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບຄຳໝັ້ນສັນຍາຄ້ຳປະກັນທີ່ໄດ້ໃຫ້** | | - | - |
| | **ລວມຫຼັກຊັບຄ້ຳປະກັນ ແລະ ການຈຳນອງ** | | **880,181,584,672** | **734,837,121,150** |

ກະກຽມໂດຍ:

ທ່ານ ນາງ ມະໂນລົມ ສາສີນອນ
ຫົວໜ້າບັນຊີ

ອະນຸມັດໂດຍ:

ທ່ານ ນາງ ສະດາພອນ ອຸຣັດຊັດ
ຜູ້ຈັດການສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ

8 ສິງຫາ 2019

# ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

| | *ທຶນຈົດທະບຽນທີ່ໄດ້ຖອກແລ້ວ ກີບ* | *ຄັງສຳຮອງຕາມລະບຽບການ ກີບ* | *ຄັງແຮສຳຫຼັບເງິນກູ້ທີ່ເກີດດອກອອກຜົນ ກີບ* | *ກຳໄລສະສົມ ກີບ* | *ລວມ ກີບ* |
|---|---|---|---|---|---|
| **ຍອດເຫຼືອໃນວັນທີ 31 ທັນວາ 2016** | **100,000,000,000** | **3,900,308,562** | **2,748,662,404** | **34,602,992,565** | **141,251,963,531** |
| ກຳໄລສຸດທິໃນປີ | - | - | - | 16,444,395,521 | 16,444,395,521 |
| ຄັງສຳຮອງຕາມລະບຽບການພາຍໃນປີ | - | 1,644,439,552 | - | (1,644,439,552) | - |
| ເງິນແຮສຸດທິສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ *(ບົດອະທິບາຍເລກທີ 14.2)* | - | - | 853,426,113 | - | 853,426,113 |
| ຜົດດ່ຽງອັດຕາແລກປ່ຽນເງິນຕາຕ່າງປະເທດ | - | - | 13,153,234 | - | 13,153,234 |
| **ຍອດເຫຼືອ ໃນວັນທີ 31 ທັນວາ 2017** | **100,000,000,000** | **5,544,748,114** | **3,615,241,751** | **49,402,948,534** | **158,562,938,390** |
| ກຳໄລສຸດທິໃນປີ | - | - | - | 34,372,606,010 | 34,372,606,010 |
| ຄັງສຳຮອງຕາມລະບຽບການພາຍໃນປີ | - | 3,437,260,602 | - | (3,437,260,602) | - |
| ເງິນແຮສຸດທິສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ *(ບົດອະທິບາຍເລກທີ 14.2)* | - | - | (1,029,336,360) | - | (1,029,336,360) |
| ຜົດດ່ຽງອັດຕາແລກປ່ຽນເງິນຕາຕ່າງປະເທດ | - | - | 28,769,986 | - | 28,769,986 |
| **ຍອດເຫຼືອໃນວັນທີ 31 ທັນວາ 2018** | **100,000,000,000** | **8,982,008,716** | **2,614,675,377** | **80,338,293,942** | **191,934,978,035** |

ກະກຽມໂດຍ:

ທ່ານ ນາງ ມະໂນລົມ ສາສິນວນ
ຫົວໜ້າບັນຊີ

ອະນຸມັດໂດຍ:

ທ່ານ ນາງ ສະດາພອນ ອຸຣົດສິດ
ຜູ້ຈັດການສາຂາ

ນະຄອນຫຼວງວຽງຈັນ
8 ສິງຫາ 2019

# ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

| | *ບົດອະທິບາຍ ເລກທີ* | *2018 ກີບ* | *2017 ກີບ* |
|---|---|---|---|
| **ກຳໄລສຸດທິກ່ອນອາກອນ** | | **33,429,089,116** | **24,161,386,848** |
| *ດັດແກ້ສຳລັບ:* | | | |
| ຫັກຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ | 15,16 | 858,064,295 | 946,235,528 |
| ເງິນແຮຈາກກິດຈະກຳທາງດ້ານສິນເຊື່ອ | 14.2 | (1,541,496,360) | 11,234,860,712 |
| ກຳໄລຈາກການຂາຍຊັບສົມບັດຄົງທີ່ | | - | (114,659,998) |
| ລາຍຮັບດອກເບ້ຍ | | (41,270,519,312) | (42,742,993,361) |
| ລາຍຈ່າຍດອກເບ້ຍ | | 20,223,162,235 | 16,251,657,159 |
| **ກະແສເງິນສົດຈາກກຳໄລຈາກການດຳເນີນງານກ່ອນການ ປ່ຽນແປງ ຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **11,698,299,974** | **9,736,486,888** |
| (ເພີ່ມຂຶ້ນ)/ຫຼຸດລົງ ຂອງຊັບສິນຈາກການດຳເນີນງານ | | | |
| ເງິນຝາກຢູ່ທະນາຄານອື່ນ | | 41,495,080,374 | 308,927,351,091 |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | 81,966,784,144 | (90,868,854,831) |
| ພັນທະບັດທີ່ຖືຄອງຈົນເຖິງມື້ຄົບກຳນົດ | | (137,306,376,000) | - |
| ຊັບສິນອື່ນໆ | | 29,768,590,835 | (18,741,648,335) |
| ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ສິນຈາກການດຳເນີນງານ | | | |
| ໜີ້ຕ້ອງສົ່ງທະນາຄານອື່ນ | | 16,625,552,996 | (20,508,251,772) |
| ເງິນຝາກລູກຄ້າ ແລະ ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ | | 158,655,459,725 | (76,830,371,193) |
| ໜີ້ສິນອື່ນໆ | | 2,180,668,969 | 743,965,571 |
| ອາກອນກຳໄລທີ່ໄດ້ຈ່າຍພາຍໃນປີ | 22 | (7,644,193,449) | (3,360,000,000) |
| ດອກເບ້ຍທີ່ໄດ້ຮັບ | | 39,088,263,921 | 43,647,975,361 |
| ດອກເບ້ຍທີ່ໄດ້ຈ່າຍ | | (19,366,048,080) | (16,181,255,666) |
| **ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | | **217,162,083,409** | **136,565,397,114** |
| **ກິດຈະກຳການລົງທຶນ** | | | |
| ຈັດຊື້ ແລະ ກໍ່ສ້າງຊັບສົມບັດຄົງທີ່ ແລະ ຊັບສິນໄລຍະຍາວອື່ນໆ | | (27,581,000) | (25,732,234) |
| ຂາຍຊັບສົມບັດຄົງທີ່ ແລະ ຊັບສິນໄລຍະຍາວອື່ນໆ | | - | 405,688,584 |
| **ກະແສເງິນສຸດທິ (ໃຊ້ເຂົ້າໃນ)/ຈາກ ກິດຈະກຳການລົງທຶນ** | | **(27,581,000)** | **379,956,350** |

# ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

| | *ບົດອະທິບາຍ ເລກທີ* | *2018 ກີບ* | *2017 ກີບ* |
|---|---|---|---|
| ກິດຈະກຳທາງການເງິນ | | - | - |
| ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ | | - | - |
| ປ່ຽນແປງສຸດທິໃນເງິນສົດ ແລະ ທຽບເທົ່າເງິນສົດ | | **217,134,502,409** | **136,945,353,464** |
| ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ | | **296,345,467,908** | **159,400,114,444** |
| ເງິນສົດ ແລະ ທຽບເທົ່າເງິນສົດທ້າຍປີ | **25** | **513,479,970,317** | **296,345,467,908** |

ກະກຽມໂດຍ:

ທ່ານ ນາງ ມະໂນລົມ ສາສິນອນ
ຫົວໜ້າບັນຊີ

ອະນຸມັດໂດຍ:

ທ່ານ ນາງ ສະດາພອນ ອຸຣັດຊັດ
ຜູ້ຈັດການສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ

8 ສິງຫາ 2019

# ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາ ນະຄອນຫຼວງວຽງຈັນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ
ໃນວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

## 1. ຂໍ້ມູນຂອງທະນາຄານ

*ການສ້າງຕັ້ງ ແລະ ການດຳເນີນງານ*

ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂານະຄອນຫຼວງວຽງຈັນ ("ສາຂາ") ເປັນສາຂາຂອງ ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) ທີ່ດຳເນີນງານຢູ່ທີ່ ປະເທດໄທ. ເຊິ່ງສາຂາໄດ້ເປີດດຳເນີນງານຢູ່ ສປປ ລາວ ຕາມໃບອະນຸຍາດ ດຳເນີນທຸລະກິດ ດ້ານການທະນາຄານ ເລກທີ 04/93/ທຫລ ອອກໃຫ້ໂດຍທະນາຄານແຫ່ງ ສປປ ລາວ ("ທຫລ") ລົງວັນທີ 25 ກຸມພາ 1993.

*ທຶນຈົດທະບຽນທີ່ຖອກແລ້ວ*

ວັນທີ 31 ທັນວາ 2018 ສາຂາມີທຶນຈົດທະບຽນທີ່ຖອກແລ້ວເປັນຈຳນວນ 100,000,000,000 ກີບ (ວັນທີ 31 ທັນວາ 2017 ມີຈຳນວນ 100,000,000,000 ກີບ).

ກິດຈະກຳຫຼັກຂອງສາຂາ ແມ່ນເພື່ອສະໜອງການບໍລິການດ້ານການທະນາຄານທົ່ວໄປ ແລະ ໃຫ້ບໍລິການກ່ຽວກັບດ້ານການເງິນໃນ ສປປ ລາວ.

**ຄະນະບໍລິຫານ**

ສະມາຊິກຂອງຄະນະບໍລິຫານພາຍໃນປີ ແລະ ໃນວັນທີທີ່ອອກເອກະສານສະບັບນີ້ ມີດັ່ງລຸ່ມນີ້:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ ນາງ ສະດາພອນ ອຸຣັດຊັດ | ຜູ້ຈັດການສາຂາ | ຖືກແຕ່ງຕັ້ງໃນວັນທີ 01 ຕຸລາ 2014 |

**ທີ່ຕັ້ງ**

ສາຂາມີທີ່ຕັ້ງຢູ່ໜ່ວຍທີ 12, ຖະໜົນ ສາມແສນໄທ, ບ້ານ ຊຽງຍືນ, ເມືອງ ຈັນທະບູລີ, ໄປສະນີເລກທີ 5400, ນະຄອນຫຼວງວຽງຈັນ, ສປປ ລາວ.

**ພະນັກງານ**

ພະນັກງານທັງໝົດຂອງສາຂາ ໃນວັນທີ 31 ທັນວາ 2018 ມີທັງໝົດ 25 ຄົນ (2017: 25 ຄົນ)

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

### *2.1 ຄຳຖະແຫຼງການປະຕິບັດຕາມ*

ຄະນະບໍລິຫານຂອງສາຂາຂໍຖະແຫຼງວ່າ ເອກະສານລາຍງານການເງິນແມ່ນຖືກກະກຽມຢ່າງຖືກຕ້ອງສອດຄ່ອງກັບກົດໝາຍການບັນຊີຂອງ ສປປ ລາວ ແລະ ບັນດາລະບຽບການທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

### *2.2 ພື້ນຖານການກະກຽມ*

ກະກຽມເອກະສານລາຍງານການເງິນເປັນສະກຸນເງິນກີບ (“ກີບ”) ໂດຍສອດຄ່ອງກັບດຳລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2000 ແລະ ກົດໝາຍວ່າດ້ວຍການບັນຊີ ແລະ ລະບຽບການບັນຊີອື່ນໆທີ່ກ່ຽວຂ້ອງ ທີ່ກຳນົດໂດຍ ທະນາຄານແຫ່ງ ສປປ ລາວ ໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ.(“ມາດຕະຖານບັນຊີລາວ“)

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ຫຼັກການ, ຂັ້ນຕອນ ແລະ ວິທີການປະຕິບັດການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ ໃບລາຍງານຜົນການດຳເນີນງານ, ໃບລາຍງານຖານະການເງິນ, ໃບລາຍງານສ່ວນປ່ຽນແປງທຶນ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍ ແມ່ນບໍ່ໄດ້ອອກແບບມາເພື່ອໃຫ້ບັນດາບຸກຄົນທີ່ບໍ່ຮັບຮູ້ກ່ຽວກັບຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງ ສປປ ລາວ, ແລະ ນອກເໜືອໄປກວ່ານັ້ນ, ເອກະສານລາຍງານການເງິນສະບັບນີ້ບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງສາຂາເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີທີ່ຍອມຮັບໂດຍທົ່ວໄປຂອງປະເທດອື່ນນອກຈາກ ສປປ ລາວ.

*ປີການບັນຊີ*

ປີການບັນຊີຂອງສາຂາແມ່ນເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

### *2.3 ການປ່ຽນແປງທາງດ້ານນະໂຍບາຍການບັນຊີ*

ນະໂຍບາຍການບັນຊີທີ່ທະນາຄານນຳໃຊ້ເພື່ອກະກຽມເອກະສານລາຍງານການເງິນເຫຼົ່ານີ້ແມ່ນມີຄວາມສອດຄ່ອງກັບເອກະສານລາຍງານການເງິນທີ່ກະກຽມສຳລັບການລາຍງານຂອງສາຂາ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2017, ຍົກເວັ້ນ ການປ່ຽນແປງຂອງນະໂຍບາຍການບັນຊີ ແລະ ບົດອະທິບາຍຊ້ອນທ້າຍທີ່ກ່ຽວກັບການດຳເນີນງານດັ່ງຕໍ່ໄປນີ້:

ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍຊ້ອນທ້າຍ ເລກທີ 2.8, ໃນວັນທີ 29 ມິຖຸນາ 2018, ຜູ້ວ່າການຂອງທະນາຄານແຫ່ງ ສປປ ລາວ ໄດ້ປະກາດໃຊ້ ຂໍ້ຕົກລົງ ເລກທີ 512/ທຫລ ກ່ຽວກັບ ການຈັດຊັ້ນໜີ້ ແລະ ການຫັກເງິນແຮຄ່າເສື່ອມ ສຳລັບກິດຈະກຳສິນເຊື່ອ, ເຊິ່ງມີຜົນບັງຄັບໃຊ້ ໃນວັນທີ 27 ກັນຍາ 2018 ແລະໄດ້ຖືກນຳໃຊ້ປ່ຽນແທນ ຂໍ້ຕົກລົງ ເລກທີ 324/ທຫລ ລົງວັນທີ 19 ເມສາ 2011. ໃນວັນທີ 14 ພະຈິກ 2018, ກົມຄຸ້ມຄອງທະນາຄານທຸລະກິດ ໄດ້ອອກຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ກຄທ ເພື່ອກຳນົດຄຳແນະນຳໃນການປະຕິບັດຕໍ່ກັບ ຂໍ້ຕົກລົງ ເລກທີ 512/ທຫລ. ລະບຽບການເຫຼົ່ານີ້ ນຳໄປສູ່ການປ່ຽນແປງທີ່ສຳຄັນໃນນະໂຍບາຍການບັນຊີດັ່ງຕໍ່ໄປນີ້:

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

***2.3 ການປ່ຽນແປງທາງດ້ານນະໂຍບາຍການບັນຊີ*** (ຕໍ່)

- ການຈັດຊັ້ນໜີ້: ປ່ຽນແປງ ແລະ ເພີ່ມເຕີມ ຂໍ້ກຳນົດໃນການຈັດຊັ້ນໜີ້ ສຳລັບເງິນກູ້ທີ່ມີການປັບໂຄງສ້າງ.
- ເງິນແຮຄ່າເສື່ອມ: ເພີ່ມທາງເລືອກສຳລັບການຄິດໄລ່ເງິນແຮຄ່າເສື່ອມໂດຍການລວມເອົາມູນຄ່າຫຼຸດຂອງຫຼັກຊັບຄ້ຳປະກັນເຂົ້າໃນສູດຄິດໄລ່.
- ພາລະຜູກພັນ: ເພີ່ມເຕີມການຮັບຮູ້, ການຈັດຊັ້ນ ແລະ ການຫັກເງິນແຮ ສຳລັບຂໍ້ຜູກພັນທາງການເງິນ.

ເນື່ອງຈາກບໍ່ມີຄຳແນະນຳຈາກ ທຫລ ໃນການຈັດຕັ້ງປະຕິບັດລະບຽບໃໝ່ນີ້ຄືນຫຼັງ, ສາຂາຈຶ່ງໄດ້ເລືອກຈັດຕັ້ງປະຕິບັດການປ່ຽນແປງນີ້ຕໍ່ໄປພາຍໜ້າ. ສະນັ້ນ, ຕົວເລກທັງໝົດ ແລະ ການນຳສະເໜີທີ່ເປັນການສົມທຽບຕົວເລກສຳລັບປີ 2017 ຈຶ່ງບໍ່ມີການປ່ຽນແປງ.

***2. 4 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ***

ລາຍຮັບ ແລະ ລາຍຈ່າຍດອກເບ້ຍ ແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ຕາມຫຼັກບັນຊີເງິນຄ້າງໂດຍນຳໃຊ້ວິທີຄິດໄລ່ແບບສະ ເໝີຕົວ ແລະ ອັດຕາດອກເບ້ຍແມ່ນໄດ້ຖືກກຳນົດໄວ້ໃນສັນຍາປ່ອຍກູ້/ເງິນຝາກຂອງລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບ ຈະຖືກຢຸດຕິກໍ່ຕໍ່ເມື່ອເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ທີ່ບໍ່ເກີດດອກອອກຜົນ ຫຼື ເມື່ອຄະນະບໍລິຫານເຊື່ອວ່າ ຜູ້ກູ້ຢືມບໍ່ມີຄວາມສາມາດທີ່ຈະຊຳລະຄືນດອກເບ້ຍ ແລະ ເງິນຕົ້ນ, ລາຍຮັບດອກເບ້ຍຂອງເງິນກູ້ທີ່ບໍ່ເກີດດອກອອກຜົນດັ່ງກ່າວຈະບັນທຶກລົງໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ ເມື່ອໄດ້ຮັບເງິນຕົວຈິງເທົ່ານັ້ນ.

***2.5 ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ***

ຄ່າທຳນຽມ ແລະ ຄ່າບໍລິການ ລວມມີຄ່າທຳນຽມທີ່ໄດ້ຮັບຈາກການໂອນເງິນ (ລວມມີການຊຳລະສະສາງ, ຄ່າທຳນຽມທີ່ເກີດຈາກການແລກປ່ຽນເງິນຕາຕ່າງປະເທດ, ຄ່າທຳນຽມທີ່ເກີດຂຶ້ນຈາກການຄ້ຳປະກັນທາງການເງິນ)

ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໂດຍອີງຕາມຫຼັກການບັນຊີເງິນສົດ.

***2.6 ເງິນສົດ ແລະ ທຽບເທົ່າເງິນສົດ***

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງໂດຍມີອາຍຸຄົບກຳນົດຕ່ຳກວ່າ ຫຼື ເທົ່າກັບ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໃນຈຳນວນທີ່ຮູ້ໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸຄົບກຳນົດຕ່ຳກວ່າ ຫຼື ເທົ່າກັບ 30 ວັນ.

***2.7 ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ***

ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ຖືກຮັບຮູ້ຕາມຕົ້ນທຶນ ແລະ ລາຍງານຕາມຍອດຄ້າງຊຳລະ ລົບໃຫ້ເງິນແຮສຳລັບເງິນກູ້ທີ່ເປັນໜີ້ຕ້ອງຮັບທວງຍາກ.

# ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາ ນະຄອນຫຼວງວຽງຈັນ



**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

*2.8 ເງິນແຮສຳລັບເງິນກູ້ທີ່ເປັນໜີ້ຕ້ອງຮັບທວງຍາກ*

*ການຈັດຊັ້ນໜີ້*

ອີງຕາມຂໍ້ຕົກລົງເລກທີ 512/ທຫລ ລົງວັນທີ 29 ມິຖຸນາ 2018 ແລະ ຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ກຄທ ລົງວັນທີ 14 ພະຈິກ 2018, ທະນາຄານໄດ້ຈັດຊັ້ນເງິນກູ້ເປັນ 5 ກຸ່ມ ໂດຍອີງຕາມປະຫວັດການຈ່າຍ ແລະບັນດາປັດໄຈອື່ນໆ. ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ແມ່ນຈະພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ. ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕ່ຳກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໄສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນຈະ ພິຈາລະນາເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ ຫຼື ໜີ້ສູນ(“NPL”)

*ເງິນແຮ*

ອີງຕາມຂໍ້ຕົກລົງ ເລກທີ512/ທຫລ ແລະ ທຫລ 898, ສາຂາສ້າງຄັງແຮສາລັບເງິນກູ້ຕາມການຈັດຊັ້ນໜີ້ ດັ່ງລຸ່ມນີ້:

| *ກຸ່ມ* | *ອັດຕາເງິນແຮ* | *ປະເພດເງິນແຮ (I)* | *ການບັນຊີສຳລັບຍອດເຫຼືອເງິນແຮ (II)* | *ການບັນຊີສຳລັບ ສ່ວນປ່ຽນແປງໃນຍອດເຫຼືອເງິນແຮ (III)* |
|---|---|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ | | | | |
| A | 0.5% (*) | ເງິນແຮທົ່ວໄປ | ໃນສ່ວນທຶນເຈົ້າຂອງ | ລາຍຈ່າຍ/ລາຍຮັບອື່ນ |
| B | 3% | ເງິນແຮສະເພາະ | ໃນສ່ວນທຶນເຈົ້າຂອງ | ລາຍຈ່າຍ/ລາຍຮັບອື່ນ |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | | | | |
| C | 20%(*) | ເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| D | 50% | ເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| E | 100% | ເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |

(i). ຈຳນວນເງິນແຮແມ່ນຖືກຄິດໄລ່ດ້ວຍສູດຄິດໄລ່ດັ່ງລຸ່ມນີ້:

(ກ) ເງິນແຮທົ່ວໄປ = ອັດຕາເງິນແຮ x ຍອດເຫລືອເງິນກູ້

(ຂ) ເງິນແຮສະເພາະ = ອັດຕາເງິນແຮ x (ຍອດເຫລືອເງິນກູ້ - ມູນຄ່າສ່ວນຫລຸດຂອງຊັບສິນຄ້ຳປະກັນ)

*ສາຂາສາມາດເລືອກທີ່ຈະບໍ່ລວມເອົາມູນຄ່າຫຼຸດຂອງຫຼັກຊັບຄ້ຳປະກັນເຂົ້າໃນສູດຄິດໄລ່ເງິນແຮ ດັ່ງທີ່ໄດ້ອະນຸຍາດໄວ້ໃນ ຂໍ້ຕົກລົງ ເລກທີ 512/ທຫລ ແລະ ຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ທຫລ.*

(ii). ຍອດເຫຼືອເງິນແຮຂອງ *ເງິນກູ້ທີ່ເກີດດອກອອກຜົນໃຫ້ລູກຄ້າ* ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ ຢູ່ “ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ” ພາຍໃຕ້ທຶນ ແລະ ຄັງສຳຮອງຂອງສາຂາ ແລະ ຍອດເຫຼືອສຳລັບ *ເງິນກູ້ທີ່ເກີດດອກອອກຜົນໃຫ້ທະນາຄານ* ແມ່ນໄດ້ບັນທຶກຢູ່ “ໜີ້ຕ້ອງຮັບຈາກທະນາຄານອື່ນ” ພາຍໃຕ້ໃບລາຍງານຖານະການເງິນ.

ຍອດເຫຼືອສະສົມຂອງເງິນແຮຂອງ *ເງິນກູ້ທີ່ບໍ່ເກີດດອກອອກຜົນ* ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ ຢູ່ “ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສຳລັບໜີ້ຕ້ອງຮັບທວງຍາກ”

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.8 ເງິນແຮສຳລັບເງິນກູ້ທີ່ເປັນໜີ້ຕ້ອງຮັບທວງຍາກ* (ຕໍ່)

*ເງິນແຮ* (ຕໍ່)

(iii). ສ່ວນປ່ຽນແປງສຳລັບເງິນແຮຂອງ *ເງິນກູ້ທີ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ "ລາຍຈ່າຍຈາກການດຳເນີນງານອື່ນໆ" ສຳລັບລາຍຈ່າຍເງິນແຮ ແລະ "ລາຍຮັບຈາກການດຳເນີນງານອື່ນໆ" ສຳລັບການເກັບຄືນລາຍຈ່າຍເງິນແຮ.

ສ່ວນປ່ຽນແປງສຳລັບເງິນແຮຂອງ *ເງິນກູ້ທີ່ບໍ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ "ລາຍຈ່າຍ/(ເກັບຄືນ) ເງິນແຮສຸດທິສຳລັບໜີ້ຕ້ອງຮັບທວງຍາກ".

(*) ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018 ສາຂາແມ່ນໄດ້ຮັບການອະນຸມັດຈາກ ທະນາຄານ ແຫ່ງ ສປປ ລາວ ໃຫ້ນຳໃຊ້ອັດຕາ 1.20% ສຳລັບກຸ່ມ A ແລະ 36% ສຳລັບ ກຸ່ມ C ໂດຍອີງຕາມໜັງສືລັດຖະການ ເລກທີ 304/ທຫລ ລົງວັນທີ 11 ກັນຍາ 2014.

### *2.9. ການລົງທຶນໃນຫຼັກຊັບທີ່ຖືຄອງຈົນເຖິງມື້ຄົບກຳນົດ.*

ການລົງທຶນໃນຫຼັກຊັບຖືໄວ້ຄົບກຳນົດ ແມ່ນຫຼັກຊັບປະເພດໜີ້ທີ່ມີກຳນົດການຊຳລະ ແລະ ໄດ້ກຳນົດວັນຄົບກຳນົດໄວ້ແລ້ວ ເຊິ່ງທະນາຄານມີຄວາມຕັ້ງໃຈ ແລະ ສາມາດຖືໄວ້ຈົນຄົບກຳນົດເພື່ອໃຫ້ໄດ້ຮັບລາຍຮັບຈາກດອກເບ້ຍ. ເມື່ອຫຼັກຊັບດັ່ງກ່າວ ຖືກຂາຍກ່ອນວັນຄົບກຳນົດແມ່ນຈະໄດ້ຖືກຈັດປະເພດຄືນໃໝ່ເປັນ ຫຼັກຊັບປະເພດມີໄວ້ເພື່ອຄ້າ ຫຼື ຫຼັກຊັບປະເພດມີໄວ້ເພື່ອຂາຍ.

ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດໄດ້ຖືກຮັບຮູ້ ຕາມມູນຄ່າຕົ້ນທຶນ ແລະ ໃນເວລາຕໍ່ມາກໍ່ຍັງຄົງຖືກນຳສະເໜີຕາມມູນຄ່າຕົ້ນທຶນເຊັ່ນເດີມ. ສ່ວນເກີນ ແລະ ສ່ວນຫຼຸດທີ່ເກີດຂຶ້ນຈາກການຈັດຊື້ຫຼັກຊັບແມ່ນຖືກແບ່ງສ່ວນເຂົ້າ ໃນໃບລາຍງານຜົນການດຳເນີນງານເຊິ່ງນຳໃຊ້ແບບວິທີສະເໝີຕົວຕາມໄລຍະເວລາຈາກ ມື້ທີ່ຊື້ ຫາ ມື້ທີ່ຄົບກຳນົດ.

ໃນແຕ່ລະປີ, ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ ຕ້ອງມີການທົບທວນຄ່າເສື່ອມຄືນ. ເງິນແຮຄ່າເສື່ອມສຳລັບຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ ຈະຖືກລົງບັນຊີເມື່ອມີການຫຼຸດລົງຫລາຍຂອງມູນຄ່າຍຸດຕິທຳຫຼຸດລົງຕ່ຳກວ່າຕົ້ນທຶນຢ່າງຕໍ່ເນື່ອງເປັນເວລາດົນ. ເງິນແຮສຳລັບຄ່າເສື່ອມ(ຖ້າມີ) ຈະຖືກບັນທຶກເປັນ ກຳໄລ/(ຂາດທຶນ) ສຸດທິຈາກການລົງທຶນໃນຫຼັກຊັບ ໃນໃບລາຍງານຜົນການດຳເນີນງານ.

**2. ສະຫຼູບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### *2.10 ຊັບສົມບັດຄົງທີ່*

ຊັບສົມບັດຄົງທີ່ລວມມີ ຊັບສົມບັດຄົງທີ່ມີຕົວຕົນເຊິ່ງ, ຊັບສົມບັດຄົງທີ່ມີຕົວຕົນປະກອບມີ ສິດໃນການເຊົ່າປັບປຸງອາຄານ, ເຟີນີເຈີ ແລະ ເຄື່ອງຕົບແຕ່ງ, ເຄື່ອງໃຊ້ຫ້ອງການ ແລະ ພາຫະນະ.

ຊັບສົມບັດຄົງທີ່ ແມ່ນສະແດງຕາມມູນຄ່າຕົ້ນທຶນ ລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ (ຖ້າມີ).

ຕົ້ນທຶນຂອງຊັບສົມບັດຄົງທີ່ປະກອບມີ ລາຄາຊື້ ບວກກັບຄ່າໃຊ້ຈ່າຍທີ່ຕິດພັນໃນການເຮັດໃຫ້ຊັບສົມບັດຄົງທີ່ສາມາດນຳໃຊ້ໄດ້.

ບັນດາລາຍຈ່າຍກັບການຊື້ເພີ່ມຕື່ມ, ການປັບປຸງຄືນໃໝ່ແມ່ນຈົດເຂົ້າເປັນທຶນ ແລະ ລາຍຈ່າຍສຳລັບຄ່າບຳລຸງຮັກສາ ແລະ ສ້ອມແປງ ແມ່ນ ສະແດງຢູ່ໃນບົດລາຍງານຜົນການດຳເນີນງານ.

ຕົ້ນທຶນ ແລະ ຄ່າຫຼຸ້ຍຫ້ຽນສະສົມຂອງຊັບສິນທີ່ໄດ້ຂາຍ ຫຼື ໄດ້ສະສາງອອກແມ່ນຈະຖືກຢຸດຮັບຮູ້ໃນໃບລາຍງານຖານະການເງິນ ແລະ ທຸກໆກຳໄລ ຫຼື ຂາດທຶນທີ່ເກີດຈາກການສະສາງອອກນັ້ນແມ່ນໄດ້ຖືກບັນທຶກໃນໃບລາຍງານຜົນການດຳເນີນງານ.

ເມື່ອຊັບສົມບັດຄົງທີ່ຖືກຂາຍ ຫຼື ສະສາງອອກ, ຕົ້ນທຶນເດີມ ແລະ ຄ່າຫຼຸ້ຍຫ້ຽນສະສົມ ແມ່ນຖືກລຶບລ້າງອອກຈາກໃບລາຍງານຖານະການເງິນ ແລະ ກຳໄລ ຫຼື ຂາດທຶນ ຈາກການຂາຍຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

### *2.11 ຄ່າຫຼຸ້ຍຫ້ຽນຊັບສົມບັດຄົງທີ່*

ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າຂອງຊັບສົມບັດຄົງທີ່ແມ່ນ ຖືກຄິດໄລ່ຕາມວິທີຄິດໄລ່ແບບສະເໝີຕົວໃນອັດຕາທີ່ກຳນົດໃຊ້ຕໍ່ການຄາດຄະເນອາຍຸການນຳໃຊ້ຂອງຊັບສົມບັດເຫຼົ່ານັ້ນ ອີງຕາມກົດໝາຍ ສ່ວຍສາອາກອນຂອງ ສປປ ລາວ ເລກທີ 70/ສພຊ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ໃນວັນທີ ຫລື ຫລັງຈາກ ວັນທີ 24 ພຶດສະພາ 2016 ອອກໂດຍປະທານສະພາແຫ່ງຊາດ, ອັດຕາການຄິດໄລ່ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າປະຈຳປີມີດັ່ງຕໍ່ໄປນີ້:

| | |
|---|---|
| ສິດໃນການເຊົ່າ | 2% |
| ອຸປະກອນເຄື່ອງຄອມພິວເຕີ | 20% |
| ເຟີນີເຈີ ແລະ ເຄື່ອງຕິດຕັ້ງ | 20% |
| ພາຫະນະ | 20% |

### *2.12 ຄັງສຳຮອງ*

ພາຍໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007 ສາຂາທະນາຄານຕ່າງປະເທດຈະຕ້ອງຮັກສາກຳໄລສຸດທິ ເພື່ອແບ່ງເຂົ້າຄັງສຳຮອງຕາມລະບຽບການດັ່ງລຸ່ມນີ້:

- ຄັງສຳຮອງຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ອີງຕາມມາດຕາທີ 156, ກົດໝາຍວ່າດ້ວຍວິສາຫະກິດລົງວັນທີ 26 ທັນວາ 2013, ທະນາຄານຈະຕ້ອງຫັກຄັງສຳຮອງ 10% ຂອງກຳໄລຫຼັງອາກອນທຸກໆປີເຂົ້າໃນຄັງສຳຮອງຕາມກົດໝາຍ. ເມື່ອຄັງສຳຮອງດັ່ງກ່າວເຖິງ 50% ຂອງທຶນຈົດທະບຽນ, ທະນາຄານອາດຈະຢຸດການຫັກຄັງສຳຮອງດັ່ງກ່າວ, ເວັ້ນເສຍແຕ່ຈະລະບຸໄວ້ເປັນຢ່າງອື່ນຕາມກົດໝາຍ. ສຳລັບຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ ຈະຕ້ອງຖືກສ້າງໂດຍການຕັດສິນໃຈຂອງຄະນະບໍລິຫານ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.13 ທຸລະກຳທີ່ເປັນເງິນຕາຕ່າງປະເທດ*

ສາຂາຮັກສາລະບົບການບັນຊີ ແລະ ການບັນທຶກລາຍການເຄື່ອນໄຫວທັງໝົດໃນສະກຸນເງິນເດີມ. ລາຍຮັບ ແລະ ລາຍຈ່າຍທີ່ເກີດຈາກເງິນຕາຕ່າງປະເທດພາຍໃນປີ ແມ່ນໄດ້ຖືກຕີເປັນເງິນ ກີບ ໃນທ້າຍເດືອນໂດຍການນຳໃຊ້ອັດຕາແລກປ່ຽນສະເລ່ຍ. ຊັບສິນ ແລະ ໜີ້ສິນທີ່ເປັນເງິນຕາຕ່າງປະເທດໃນທ້າຍປີ ແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນໃນມື້ສ້າງໃບສະຫຼຸບຊັບສິນບັດ. ສ່ວນຕ່າງທີ່ເກີດຂຶ້ນຈາກການຕີມູນຄ່າອັດຕາແລກປ່ຽນຂອງ ຊັບສິນ ແລະ ໜີ້ສິນ ທາງການເງິນໃນມື້ສ້າງໃບລາຍງານຖານະການເງິນ ແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ. ລາຍການຂອງອັດຕາແລກປ່ຽນທີ່ໄດ້ຖືກໃຊ້ໃນແຕ່ລະສະກຸນເງິນຕໍ່ກັບເງິນກີບ ໃນວັນທີ 31 ທັນວາ 2018 ແມ່ນໄດ້ສະແດງດັ່ງລຸ່ມນີ້:

| | *31 ທັນວາ 2018* | *31 ທັນວາ 2017* |
|---|---:|---:|
| | *ກີບ* | *ກີບ* |
| ໂດລາ | 8,536.00 | 8,275.00 |
| ບາດ | 265.45 | 253.90 |
| ຢູໂຣ | 9,791.00 | 9,944.00 |

### *2.14 ອາກອນກຳໄລ*

*ອາກອນໃນປີ*

ສາຂາມີພັນທະຈ່າຍອາກອນໃນອັດຕາ 24% ຂອງກຳໄລທັງໝົດກ່ອນຫັກອາກອນສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018 (2017: 24%) ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນສະບັບປັບປຸງເລກທີ 70/ສພຊ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 24 ພຶດສະພາ 2016. ການແຈ້ງອາກອນຂອງສາຂາຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງກົມສ່ວຍສາອາກອນ.

*ອາກອນເລື່ອນຊຳລະ*

ອາກອນເລື່ອນຊຳລະແມ່ນໄດ້ສະແດງເຖິງຄວາມແຕກຕ່າງຊົ່ວຄາວໃນວັນທີຂອງເອກະສານລາຍງານການເງິນລະຫວ່າງ ພື້ນຖານອາກອນຂອງຊັບສິນ ແລະ ໜີ້ສິນ ແລະ ຈຳນວນມູນຄ່າຕາມບັນຊີຂອງລາຍການດັ່ງກ່າວສຳລັບຈຸດປະສົງຂອງການລາຍງານທາງການເງິນ. ໜີ້ສິນອາກອນເລື່ອນຊຳລະເກີດຂຶ້ນຈາກການຮັບຮູ້ຄັ້ງທຳອິດຂອງຄ່ານິຍົມ ຫຼື ຂອງຊັບສິນ ຫຼື ໜີ້ສິນໃນການເຄື່ອນໄຫວທີ່ບໍ່ແມ່ນການຮວມທຸລະກິດ ແລະ ໃນເວລາການເຄື່ອນໄຫວນັ້ນ ເຊິ່ງຈະບໍ່ມີຜົນກະທົບຕໍ່ກຳໄລທາງບັນຊີ ຫຼື ກຳໄລ-ຂາດທຶນທາງອາກອນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.14 ອາກອນກຳໄລ* (ຕໍ່)

*ອາກອນເບື້ອນຊຳລະ*

